ສາລີ ພວມກາຍເປັນ ສິນຄ້າສົ່ງອອກສຳຄັນ
ປະຈຸບັນ ຕະຫລາດພາຍໃນ ແລະ ຕ່າງປະເທດມີຄວາມຕ້ອງການສາລີ
ເພື່ອຫມູນໃຊ້ເຂົ້າໃນອຸດສາຫະກຳປຸງແຕ່ງອາຫານສັດ ແລະ ການ ບໍລິໂພກ ເພີ່ມຂຶ້ນໃນແຕ່ລະປີ
ອັນໄດ້ສົ່ງຜົນດີ ຕໍ່ປະເທດ ຜະລິດ ສາລີທີ່ຈະຂະຫຍາຍ

ເນື້ອທີ່ການຜະລິດຕອບສະຫນອງ ຄວາມຮຽກຮ້ອງຕ້ອງການຂອງຕະຫລາດ.

ສປປ ລາວ ເປັນປະເທດທີ່ມີພົນລະເມືອງຫນ້ອຍປະຊາຊົນເກືືອບ 80% ທີ່ອາໄສໃນຊົນນະບົດ
ແມ່ນຍຶດເອົາການຜະລິດກະສິກຳ ເປັນຫລັກ ໂດຍສະເພາະການປູກສາລີ
ຖືວ່າເປັນອັນດັບສອງຮອງຈາກການປູກເຂົ້າ ເປັນຕົ້ນບັນດາແຂວງພາກເຫນືອ
ການຜະລິດສາລີເພື່ອ ສົ່ງອອກໄດ້ຂະຫຍາຍຕົວສູງຂຶ້ນ, ສາມາດສ້າງລາຍຮັບໄດ້ດີພໍສົມຄວນ.

ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດລາຍງານວ່າ: ຄວາມຕ້ອງການສາລີໃນຕະຫລາດໂລກ
ເພື່ອນຳໃຊ້ເຂົ້າໃນການຜະລິດອຸດສາ ຫະກຳຕ່າງໆຍັງເພີ່ມຂຶ້ນ ແລະ
ເຮັດໃຫ້ລາຄາສາລີໃນຕະຫລາດໂລກສູງຂຶ້ນ
ກາຍເປັນໂອກາດດີສຳລັບປະເທດຜະລິດສາລີສົ່ງອອກໃຫ້ ຫລາຍຂຶ້ນກວ່າເກົ່າ
ເພື່ອທີ່ຕອບສະຫນອງກັບຄວາມຕ້ອງການທີ່ມີລັກສະນະເພີ່ມຂຶ້ນເລື້ອຍໆ.
ສະເພາະຕະຫລາດສາລີຢູ່ປະເທດໃກ້ຄຽງຂອງລາວເຊັ່ນ: ຕະຫລາດຫວຽດນາມ, ໄທ ແລະ ສປ ຈີນ
ລ້ວນແຕ່ມີຄວາມຕ້ອງການສາລີສູງພໍສົມຄວນ.
ໃນແຕ່ລະປີກໍ່ມີການນຳເຂົ້າສາລີຈາກລາວຫລາຍແສນໂຕນ
ກາຍເປັນຕະຫລາດຫລັກຂອງລາວໃນການສົ່ງອອກສາລີ.

ປະຈຸບັນໂອກາດສາລີຂອງລາວໃນການເຂົ້າເຖິງຕະຫລາດສາລີໄທ, ຫວຽດນາມ
ແລະຈີນແມ່ນມີຄວາມສະດວກສະບາຍເນື່ອງຈາກ
ການໄດ້ຮັບສິດທິພິເສດທາງການຄ້າເຖິງສະພາບເງື່ອນໄຂຕະຫລາດຈະເອື້ອອຳນວຍໃຫ້ແກ່ຊາວກະສິ
ກອນໃນການຂະຫຍາຍກຳລັງການ ຜະລິດ
ແຕ່ກໍ່ຍັງມີບັນຫາແລະສິ່ງທ້າທາຍທີ່ເປັນອຸປະສັກໃນການຂະຫຍາຍເນື້ອທີ່ປູກສາລີ
ໂດຍສະເພາະການເຂົ້າຫາແຫລ່ງທຶນຍັງຫຍຸ້ງ ຍາກແລະຈຳກັດຢູ່,
ອີກທັງເຕັກນິກການປູກຍັງບໍ່ສູງ, ເຮັດໃຫ້ສະມັດຕະພາບການຜະລິດຍັງຕ່ຳ
ເມື່ອທຽບໃສ່ການຜະລິດຢູ່ປະເທດອ້ອມ ຂ້າງ ແລະ
ການເກັບຮັກສາຍັງບໍ່ມີວິທີການທີ່ທັນສະໄຫມ ສົ່ງຜົນເຮັດໃຫ້ປະສິດທິພາບຕ່ຳ
ອັນເປັນສາເຫດເຮັດໃຫ້ສາລີມີລາຄາຕ່ຳລົງ; ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດເປີດເຜີຍ.
 1 / 2

ສາລີ ພວມກາຍເປັນ ສິນຄ້າສົ່ງອອກສຳຄັນ

ຢ່າງໃດກໍ່ຕາມ,
ເມື່ອເບິ່ງສະພາບໂດຍລວມແລ້ວເຫັນວ່າປະຊາຊົນມີຄວາມເອົາໃຈໃສ່ສູງຕໍ່ການຜະລິດ;
ເຂົາເຈົ້າໄດ້ຫັນຈາກການຜະ
ລິດພໍກຸ້ມຢູ່ກຸ້ມກິນກ້າວໄປສູ່ການຜະລິດເປັນສິນຄ້າຫລາຍຂຶ້ນ
ເຮັດໃຫ້ເນື້ອທີ່ສາລີໃນທົ່ວປະເທດຂະຫຍາຍຕົວຢ່າງກວ້າງຂວາງ, ສະເລ່ຍ ແລ້ວບໍ່ຕ່ຳກວ່າ
ສອງແສນເຮັກຕາ ແລະ ຜົນຜະລິດຫລາຍກວ່າ 1 ລ້ານໂຕນ.

ການປູກສາລີເປັນສິນຄ້າຫລາຍກວ່າຫມູ່ແມ່ນຢູ່ບັນດາແຂວງພາກເຫນືອຂອງລາວກວມອັດຕາສ່ວນ
82% ຂອງເນື້ອທີ່ສາລີທັງຫມົດ ເຊັ່ນ: ໄຊຍະບູລີ, ອຸດົມໄຊ, ຫົວພັນ,ບໍ່ແກ້ວ, ຫລວງພະບາງ,
ຜົ້ງສາລີ; ສ່ວນພາກກາງມີ 12%ແລະພາກໃຕ້ 6%. ດ້ານສະຖາບັນຄົ້ນ ຄວ້າເສດຖະກິດແຫ່ງຊາດ
ຄາດວ່າໃນອະນາຄົດການຜະລິດສາລີຂອງປະຊາຊົນຈະເປັນຂະບວນຟົດຟື້ນຂຶ້ນຫລາຍກວ່າເກົ່າ
ເນື່ອງຈາກ ລາຄາສາລີໃນຕະຫລາດໂລກມີທ່າດີຂຶ້ນຢ່າງຕໍ່ເນື່ອງ
ຈະເປັນຈຸດດຶງດູດໃຫ້ປະຊາຊົນປູກຫລາຍຂຶ້ນ.

ຢ່າງໃດກໍ່ຕາມ ຊາວກະສິ
ກອນໃນຫລາຍແຂວງກໍ່ໄດ້ຝາກເຖິງພາກສ່ວນທີ່ກ່ຽວຂ້ອງຈົ່ງເປັນເຈົ້າການຊ່ວຍກັນໃນການຊຸກຍ
ູ້ສົ່ງເສີມ ຕະຫລາດສາລີລາວໃຫ້ກວ້າງຂວາງມີຕະຫລາດຮອງຮັບທີ່ແນ່ນອນ
ຫລັງຈາກທີ່ເຄີຍມີບົດຮຽນໃນປີ 2008 ທີ່ສາລີລາວຫລາຍແສນໂຕນ ຕ້ອງການຄ້າງສາງ ແລະ
ເກີດບັນຫາລາຄາຕົກຕ່ຳ ຈາກການກົດລາຄາລົງຂອງຕະຫລາດປາຍທາງ. ໃນຄັ້ງນັ້ນ
ໄດ້ເຮັດໃຫ້ຊາວກະສິ ກອນຫລາຍຄົນໄດ້ຮັບຄວາມເດືອດຮ້ອນ ແລະ
ເກືອບບໍ່ກ້າກັບມາປູກສາລີອີກ.

ແຫຼ່ງທີ່ມາຂອງຂ່າວ
 2 / 2